ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ ເລກທີ 00302 /ກພສ.

ນະຄອນຫຼວງວຽງຈັນ,ວັນທີ 17 JAN 2017

<u>ແຈ້ງການແນະນຳ</u>

ເຖິງ: ບັນດາດ່ານພາສີສາກົນ, ກອງກວດກາພາສີແຂວງ, ນະຄອນຫຼວງວຽງຈັນໃນທົ່ວປະເທດ.

ເລື່ອງ: ການຄຸ້ມຄອງການນຳເຂົ້ານ້ຳມັນກາດຍົນ ຮັບໃຊ້ສາຍການບິນຕ່າງປະເທດຢູ່ບັນດາດ່ານສະໜາມບິນສາກົນ ໃນທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ,ລົງວັນທີ 20 ທັນວາ 2011ແລະ ກົດໝາຍພາສີສະບັບປັບປຸງໃໝ່ບາງມາດຕາ ເລກທີ 57/ສພຊ,ລົງວັນທີ 24 ທັນວາ 2014.
- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງການເງິນ ສະບັບເລກທີ 1765/ກງ, ລົງວັນທີ 03 ມິຖຸນາ 2015,ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.

ເພື່ອຮັບປະກັນໃນການຄຸ້ມຄອງການນຳເຂົ້ານ້ຳມັນກາດຍົນຮັບໃຊ້ສາຍການບິນຕ່າງປະເທດ ຢູ່ບັນດາດ່ານສະໜາມບິນສາກົນ ໃຫ້ສອດຄອງ, ຖືກຕ້ອງຕາມກົດໝາຍ, ລະບຽບການຕ່າງໆທີ່ກຳນົດໄວ້, ສອດຄ່ອງຕາມຫຼັກການສາກົນແລະ ໃຫ້ມີຄວາມເປັນເອກະພາບໃນທົ່ວປະເທດ.

## ກົມພາສີ ອອກແຈ້ງການແນະນຳດັ່ງນີ້ :

1. ການນຳເຂົ້ານ້ຳມັນກາດຍົນຮັບໃຊ້ສາຍການບິນຕ່າງປະເທດ ໝາຍເຖິງ ການນຳເຂົ້າຊົ່ວຄາວໃນໄລຍະໃດໜຶ່ງ ເພື່ອຈຳໜ່າຍໃຫ້ສາຍການບິນຕາມສັນຍາ, ຊຶ່ງຈະຖືກງົດເກັບພາສີ-ອາກອນເປັນການຊົ່ວຄາວ ບໍ່ໃຫ້ເກີນກຳນົດເວລາ 3 ເດືອນ ແລະ ຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ ຕາມລະບຽບການ.
2. ຜູ້ປະກອບການ ຕ້ອງສ້າງແຜນນຳເຂົ້າປະຈຳປີ ຕາມຄວາມຕ້ອງການນຳໃຊ້ຕົວຈິງ, ຕາມສັນຍາຊື້-ຂາຍ, ຕາມການຄິດໄລ່ບໍລິມາດການນຳໃຊ້ຂອງຂະແໜງການກ່ຽວຂ້ອງ ແລ້ວ ນຳສະເໜີຂໍອະນຸມັດນະໂຍບາຍ ງົດເກັບພາສີ-ອາກອນ ຕາມລະບຽບການ.

3. ແນະນຳປະກອບເອກະສານໃບແຈ້ງພາສີເປັນລາຍລະອຽດ (IM5) ແລະ ໃບແຈ້ງພາສີ (EX3) ຊຳລະສະສາງລະບອບນຳເຂົ້າຊົ່ວຄາວ ດ້ວຍການງົດເກັບພາສີ-ອາກອນ.
   - ສຳລັບດ່ານພາສີສາກົນສະໜາມບິນ ທີ່ມີລະບົບການແຈ້ງພາສີ ແບບເອເລັກໂຕຼນິກ (ASYCUDA) ແມ່ນໃຫ້ດຳເນີນການປະກອບໃບແຈ້ງພາສີ (IM5) ນຳເຂົ້າຊົ່ວຄາວ ຢູ່ດ່ານບ່ອນນຳເຂົ້າ ແລະ ປະກອບໃບແຈ້ງພາສີ (EX3) ສົ່ງອອກຄືນ ຢູ່ບ່ອນດ່ານສົ່ງອອກ.
   - ສຳລັບດ່ານພາສີສາກົນສະໜາມບິນ ທີ່ຍັງບໍ່ທັນໄດ້ນຳໃຊ້ລະບົບການແຈ້ງພາສີ ແບບເອເລັກໂຕຼນິກ (ASYCUDA) ແມ່ນໃຫ້ປະກອບໃບແຈ້ງພາສີເປັນລາຍລະອຽດ (IM5) ແລະ (EX3) ຢູ່ບ່ອນດ່ານນຳເຂົ້າ, ໂດຍມອບໃຫ້ດ່ານສະໜາມບິນ ສະຫຼຸບສັງລວມບັນຊີຕາມໃບບິນຈ່າຍນ້ຳມັນກາດຍົນອອກຈາກສາງຕົວຈິງໃນແຕ່ລະຄັ້ງ ແລ້ວນຳສົ່ງໃຫ້ດ່ານບ່ອນນຳເຂົ້າເປັນຜູ້ປະກອບໃບແຈ້ງພາສີ (EX3) ຊຳລະສະສາງຕາມລະບຽບການ.
4. ໃຫ້ເຈົ້າໜ້າທີ່ພາສີ ເອົາໃຈໃສ່ຄຸ້ມຄອງ, ກວດກາການນຳເຂົ້ານ້ຳມັນກາດຍົນຕາມການອະນຸຍາດນຳເຂົ້າຈາກຂະແໜງການກ່ຽວຂ້ອງແຕ່ລະຄັ້ງ, ຕ້ອງມີເອກະສານປະກອບການນຳເຂົ້າເປັນຕົ້ນ: ເອກະສານຂົນສົ່ງ, ໃບອິນວອຍ, ໃບຢັ້ງຢືນບໍລິມາດຕິດຊັ່ງນ້ຳໜັກ, ໃບແຈ້ງພາສີຂາອອກຂອງປະເທດສົ່ງອອກ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ.
5. ກ່ອນການອະນຸຍາດນ້ຳມັນກາດຍົນອອກຈາກດ່ານ ຕ້ອງປະສານສົມທົບລະຫວ່າງ ເຈົ້າໜ້າທີ່ພາສີຕົ້ນທາງ-ປາຍທາງ, ກອງກວດກາພາສີແຂວງ ແລະ ນະຄອນຫຼວງ ໃນການຄຸ້ມຄອງ, ຕິດຕາມການເຄື່ອນຍ້າຍເຂົ້າໃນລະບົບສາງນ້ຳມັນເຊື້ອໄຟທີ່ ລັດຖະການພາສີ ກຳນົດ.
6. ລະບົບສາງເກັບມ້ຽນນ້ຳມັນກາດຍົນຮັບໃຊ້ສາຍການບິນຕ່າງປະເທດຕ້ອງມີລະບົບສາງເກັບມ້ຽນສະເພາະ.
7. ການຄຸ້ມຄອງ, ຕິດຕາມ, ກວດກາ, ການນຳເຂົ້າ-ຈ່າຍອອກຈາກລະບົບສາງນ້ຳມັນກາດຍົນຮັບໃຊ້ສາຍການບິນຕ່າງປະເທດ ເຈົ້າໜ້າທີ່ພາສີປະຈຳສະໜາມບິນສາກົນ ແລະ ພະນັກງານສາງ ຕ້ອງເຊັນຮັບຮູ້ ແລະ ຢັ້ງຢືນເປັນລາຍລັກອັກສອນໃສ່ໃບບິນຈ່າຍນ້ຳມັນກາດຍົນອອກຈາກສາງໃນແຕ່ລະຄັ້ງ.
8. ມອບໃຫ້ບັນດາດ່ານພາສີສາກົນ, ໂດຍສະເພາະດ່ານພາສີສະໜາມບິນສາກົນ, ກອງກວດກາພາສີແຂວງ ແລະ ນະຄອນຫຼວງວຽງຈັນ ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສະຫຼຸບສັງລວມເປັນປະຈຳອາທິດ, ເດືອນ, ງວດ ແລະ ປີ ຮ່ວມກັບພາກສ່ວນກ່ຽວຂ້ອງ ແລະ ລາຍງານກົມພາສີ (ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ) ຢ່າງເປັນທາງການ.
9. ແຈ້ງການແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ